ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການຄຸ້ມຄອງຫຼັກຊັບ | ເລກທີ: 17 /ຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 03 SEP 2018

# ຂໍ້ຕົກລົງ
# ວ່າດ້ວຍຕົວແທນຜູ້ຖືຮຸ້ນກູ້

- ອີງຕາມກົດໝາຍວ່າດ້ວຍຫຼັກຊັບ ສະບັບເລກທີ 21/ສພຊ, ລົງວັນທີ 10 ທັນວາ 2012;
- ອີງຕາມດຳລັດວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 195/ນຍ, ລົງວັນທີ 12 ມິຖຸນາ 2017;
- ອີງຕາມໜັງສືສະເໜີຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ສະບັບເລກທີ 0023/ສຄຄຊ, ລົງວັນທີ 16 ສິງຫາ 2018.

## ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ ແລະ ລະບຽບການ ກ່ຽວກັບການເຄື່ອນໄຫວຂອງຕົວແທນຜູ້ຖືຮຸ້ນກູ້ ເພື່ອອຳນວຍຄວາມສະດວກ, ປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ຖືຮຸ້ນກູ້ ແລະ ຜູ້ອອກຈຳໜ່າຍຮຸ້ນກູ້ ແນໃສ່ຮັບປະກັນຄວາມເປັນລະບຽບຮຽບຮ້ອຍ, ໂປ່ງໃສ ແລະ ຍຸຕິທຳ ໃນຂົງເຂດວຽກງານຫຼັກຊັບ.

### ມາດຕາ 2 ຕົວແທນຜູ້ຖືຮຸ້ນກູ້

ຕົວແທນຜູ້ຖືຮຸ້ນກູ້ ແມ່ນຜູ້ຕາງໜ້າຜູ້ຖືຮຸ້ນກູ້ ແລະ ເປັນຜູ້ທີ່ໃຫ້ບໍລິການແກ່ຜູ້ອອກຈຳໜ່າຍຮຸ້ນກູ້ ເພື່ອຕິດຕາມການເຄື່ອນໄຫວ ແລະ ການປະຕິບັດພັນທະຂອງຜູ້ອອກຈຳໜ່າຍຮຸ້ນກູ້ ຕໍ່ຜູ້ຖືຮຸ້ນກູ້ ຕາມຂອບເຂດສິດ ແລະ ໜ້າທີ່ ທີ່ກຳນົດໄວ້ໃນ ສັນຍາແຕ່ງຕັ້ງຕົວແທນຜູ້ຖືຮຸ້ນກູ້ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ຖືຮຸ້ນກູ້.

### ມາດຕາ 3 ອະທິບາຍຄຳສັບ

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຜູ້ຖືຮຸ້ນກູ້ ໝາຍເຖິງ** ຜູ້ລົງທຶນ ປະເພດ ບຸກຄົນ ຫຼື ສະຖາບັນ ທັງພາຍໃນ ແລະ ຕ່າງປະເທດ ທີ່ລົງທຶນຊື້ ແລະ ຖືຄອງຮຸ້ນກູ້;
2. **ຜູ້ອອກຈຳໜ່າຍຮຸ້ນກູ້ ໝາຍເຖິງ** ບໍລິສັດທີ່ໄດ້ຮັບອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃນການນຳເອົາຮຸ້ນກູ້ຂອງຕົນອອກຈຳໜ່າຍ ຢູ່ ສປປ ລາວ;
3. **ຜູ້ຄໍ້າປະກັນການຊຳລະໜີ້ ໝາຍເຖິງ** ທະນາຄານທຸລະກິດ ຫຼື ສະຖາບັນການເງິນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບວ່າດ້ວຍການອອກຈຳໜ່າຍຮຸ້ນກູ້;
4. **ຜູ້ຖືຮຸ້ນລາຍໃຫຍ່ ໝາຍເຖິງ** ຜູ້ຖືຮຸ້ນທີ່ມີສິດອອກສຽງ ແຕ່ສິບສ່ວນຮ້ອຍຂຶ້ນໄປ (10% ຂຶ້ນໄປ) ຂອງຈຳນວນຮຸ້ນທີ່ມີສິດອອກສຽງທັງໝົດ;
5. **ສັນຍາແຕ່ງຕັ້ງຕົວແທນຜູ້ຖືຮຸ້ນກູ້ ໝາຍເຖິງ** ສັນຍາລະຫວ່າງຜູ້ອອກຈຳໜ່າຍຮຸ້ນກູ້ ແລະ ຕົວແທນຜູ້ຖືຮຸ້ນກູ້ ທີ່ໄດ້ກຳນົດກ່ຽວກັບ ສິດ, ໜ້າທີ່ ແລະ ພັນທະຂອງຄູ່ສັນຍາ;
6. **ໃບຮຸ້ນກູ້ລວມ ໝາຍເຖິງ** ໃບຮຸ້ນກູ້ທີ່ບໍ່ໄດ້ບົ່ງຊື່ຂອງຜູ້ຖື ຊຶ່ງຜູ້ອອກຈຳໜ່າຍຮຸ້ນກູ້ ຕ້ອງນຳໄປຝາກໄວ້ຢູ່ ສູນຮັບຝາກຫຼັກຊັບ;
7. **ໃບຢັ້ງຢືນການຖືຄອງຮຸ້ນກູ້ ໝາຍເຖິງ** ໜັງສືແຈ້ງໃຫ້ຜູ້ຖືຮຸ້ນກູ້ຊາບກ່ຽວກັບ ຈຳນວນຮຸ້ນກູ້ທີ່ຖືຄອງ, ເງື່ອນໄຂຮຸ້ນກູ້ ແລະ ສິດຂອງຜູ້ຖືຮຸ້ນກູ້;
8. **ກຳມະການທີ່ບໍ່ມີສ່ວນຮ່ວມໃນການບໍລິຫານ ໝາຍເຖິງ** ກຳມະການຂອງສະພາບໍລິຫານຂອງ ຜູ້ອອກຈຳໜ່າຍຮຸ້ນກູ້ ທີ່ບໍ່ດຳລົງຕຳແໜ່ງເປັນ ຄະນະອຳນວຍການ.

### ມາດຕາ 4 ຫຼັກການ

ການເຄື່ອນໄຫວເປັນຕົວແທນຜູ້ຖືຮຸ້ນກູ້ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ຊຸກຍູ້ສົ່ງເສີມຕະຫຼາດທຶນ ໃຫ້ມີການພັດທະນາແບບຍືນຍົງ;
2. ປະຕິບັດພັນທະຕາມການມອບໝາຍ;
3. ປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ຖືຮຸ້ນກູ້;
4. ປ້ອງກັນ ແລະ ຫລຸດຜ່ອນຄວາມສ່ຽງ ຕໍ່ລະບົບການເງິນ.

### ມາດຕາ 5 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ຕົວແທນຜູ້ຖືຮຸ້ນກູ້ ແລະ ພາກສ່ວນທີ່ກ່ຽວຂ້ອງ ກັບການເຄື່ອນໄຫວກ່ຽວກັບຕົວແທນຜູ້ຖືຮຸ້ນກູ້.

## ໝວດທີ 2
## ການຂໍອະນຸຍາດເປັນຕົວແທນຜູ້ຖືຮຸ້ນກູ້

**ມາດຕາ 6 ການຂໍອະນຸຍາດເປັນຕົວແທນຜູ້ຖືຮຸ້ນກູ້**

ຜູ້ທີ່ມີຈຸດປະສົງຂໍອະນຸຍາດເປັນຕົວແທນຜູ້ຖືຮຸ້ນກູ້ ຕ້ອງມີເງື່ອນໄຂຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 7 ແລະ ປະກອບເອກະສານຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 8 ຂອງຂໍ້ຕົກລົງສະບັບນີ້ ເພື່ອຍື່ນຕໍ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ພິຈາລະນາ.

**ມາດຕາ 7 ເງື່ອນໄຂການເປັນຕົວແທນຜູ້ຖືຮຸ້ນກູ້**

ຜູ້ທີ່ມີຈຸດປະສົງເປັນຕົວແທນຜູ້ຖືຮຸ້ນກູ້ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນທະນາຄານທຸລະກິດ ແລະ ບໍລິສັດຫຼັກຊັບ ທີ່ໄດ້ຮັບການສ້າງຕັ້ງ ແລະ ເຄື່ອນໄຫວຢ່າງຖືກຕ້ອງ ຕາມລະບຽບກົດໝາຍຂອງ ສປປ ລາວ;
2. ມີລະບົບການຄຸ້ມຄອງບໍລິຫານພາຍໃນທີ່ຮັບປະກັນ ໃຫ້ແກ່ການເຄື່ອນໄຫວເປັນຕົວແທນຜູ້ຖືຮຸ້ນກູ້;
3. ມີພະນັກງານທີ່ມີປະສົບການດ້ານວຽກງານການເງິນ-ການທະນາຄານ ຫຼື ວຽກງານຫຼັກຊັບ ແລະ ອື່ນໆທີ່ຈໍາເປັນ;
4. ຜູ້ບໍລິຫານ ແລະ ພະນັກງານທີ່ປະຕິບັດໜ້າທີ່ ທາງດ້ານການເປັນຕົວແທນຜູ້ຖືຮຸ້ນກູ້ ບໍ່ເຄີຍລະເມີດລະບຽບກົດໝາຍ ທີ່ກ່ຽວຂ້ອງໃນຂົງເຂດການເງິນ-ການທະນາຄານ ທີ່ມີລັກສະນະຮ້າຍແຮງ ແລະ ບໍ່ເຄີຍຖືກສານຕັດສິນລົງໂທດທາງອາຍາ ຫຼື ພວມຖືກດໍາເນີນຄະດີ ໃນຂໍ້ຫາສໍ້ໂກງຊັບ, ຍັກຍອກຊັບ, ຮັບ ຫຼື ໃຫ້ສິນບົນ, ສໍ້ລາດບັງຫຼວງ ຫຼື ຟອກເງິນ;
5. ມີເງື່ອນໄຂອື່ນ ຕາມການເຫັນດີຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

**ມາດຕາ 8 ເອກະສານປະກອບການຂໍອະນຸຍາດເປັນຕົວແທນຜູ້ຖືຮຸ້ນກູ້**

ຜູ້ທີ່ມີຈຸດປະສົງເປັນຕົວແທນຜູ້ຖືຮຸ້ນກູ້ ຕ້ອງປະກອບເອກະສານ ດັ່ງນີ້:

1. ຄໍາຮ້ອງຕາມແບບພິມຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ;
2. ບົດນໍາສະເໜີກ່ຽວກັບການເປັນຕົວແທນຜູ້ຖືຮຸ້ນກູ້;
3. ໂຄງປະກອບທາງດ້ານກົງຈັກ ແລະ ບຸກຄະລາກອນ;
4. ລະບຽບການ ແລະ ຄູ່ມື ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຕົວແທນຜູ້ຖືຮຸ້ນກູ້;
5. ຊີວະປະຫວັດຫຍໍ້ຂອງ ຜູ້ບໍລິຫານ ແລະ ພະນັກງານທີ່ປະຕິບັດໜ້າທີ່ ທາງດ້ານການເປັນຕົວແທນຜູ້ຖືຮຸ້ນກູ້;
6. ໃບຢັ້ງຢືນວຸດທິການສຶກສາ ແລະ ໃບຢັ້ງຢືນການຝຶກອົບຮົມຂອງ ຜູ້ບໍລິຫານ ແລະ ພະນັກງານທີ່ປະຕິບັດໜ້າທີ່ ທາງດ້ານການເປັນຕົວແທນຜູ້ຖືຮຸ້ນກູ້ (ຖ້າມີ);
7. ໃບແຈ້ງໂທດຂອງ ຜູ້ບໍລິຫານ ແລະ ພະນັກງານທີ່ປະຕິບັດໜ້າທີ່ ທາງດ້ານການເປັນຕົວແທນຜູ້ຖືຮຸ້ນກູ້;

8. ເອກະສານອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 9 ການພິຈາລະນາການຂໍອະນຸຍາດເປັນຕົວແທນຜູ້ຖືຮຸ້ນກູ້**

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຕ້ອງພິຈາລະນາການຂໍອະນຸຍາດ ຫຼື ປະຕິເສດ ໃຫ້ແກ່ຜູ້ຮ້ອງຂໍເປັນຕົວແທນຜູ້ຖືຮຸ້ນກູ້ ພາຍໃນກຳນົດເວລາ ສີ່ສິບຫ້າວັນ (45 ວັນ) ນັບແຕ່ວັນໄດ້ຮັບເອກະສານປະກອບຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ. ກໍລະນີ ປະຕິເສດ ຕ້ອງແຈ້ງຕອບເປັນລາຍລັກອັກສອນພ້ອມດ້ວຍເຫດຜົນ.

ໃນເວລາການພິຈາລະນາ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ມີສິດລົງກວດກາລະບົບການຄຸ້ມຄອງບໍລິຫານພາຍໃນ ຂອງຜູ້ຂໍອະນຸຍາດເປັນຕົວແທນຜູ້ຖືຮຸ້ນກູ້.

**ມາດຕາ 10 ການປະກາດໃຫ້ມວນຊົນຊາບ**

ພາຍຫຼັງໄດ້ຮັບການອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບແລ້ວ ຕົວແທນຜູ້ຖືຮຸ້ນກູ້ ຕ້ອງປະກາດໃຫ້ມວນຊົນຊາບ ໂດຍຜ່ານພາຫະນະສື່ມວນຊົນ ຢ່າງໜ້ອຍ ຫ້າ ວັນລັດຖະການຕໍ່ເນື່ອງ ນັບແຕ່ວັນໄດ້ຮັບການອະນຸຍາດ ເປັນຕົ້ນໄປ.

## ໝວດທີ 3
## ສິດ ແລະ ໜ້າທີ່ ຂອງຕົວແທນຜູ້ຖືຮຸ້ນກູ້, ຜູ້ອອກຈຳໜ່າຍຮຸ້ນກູ້ ແລະ ຜູ້ຖືຮຸ້ນກູ້

**ມາດຕາ 11 ສິດ ແລະ ໜ້າທີ່ຂອງຕົວແທນຜູ້ຖືຮຸ້ນກູ້**

ຕົວແທນຜູ້ຖືຮຸ້ນກູ້ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ສ້າງ ກົນໄກ, ກົດລະບຽບ ແລະ ຄູ່ມື ໃນການຈັດຕັ້ງປະຕິບັດພາຍໃນທີ່ຕິດພັນກັບການໃຫ້ບໍລິການເປັນຕົວແທນຜູ້ຖືຮຸ້ນກູ້;
2. ຕິດຕາມ ລຳດັບຄວາມໜ້າເຊື່ອຖື, ຄວາມປອດໄພ ແລະ ຄວາມພຽງພໍ ຂອງຫຼັກຊັບຄ້ຳປະກັນຂອງຜູ້ອອກຈຳໜ່າຍຮຸ້ນກູ້. ກໍລະນີ ຫຼັກຊັບຄ້ຳປະກັນຫາກຫຼຸດລົງ ຕ້ອງຊຸກຍູ້ຜູ້ອອກຈຳໜ່າຍຮຸ້ນກູ້ ໃຫ້ມີມາດຕະການຮອງຮັບ ແລະ ຕິດຕາມການຈັດຕັ້ງປະຕິບັດ;
3. ຕິດຕາມ ຄວາມປອດໄພ ແລະ ຄວາມພຽງພໍ ຂອງຫຼັກຊັບຄ້ຳປະກັນ ຂອງຜູ້ຄ້ຳປະກັນການຊຳລະໜີ້. ກໍລະນີ ຫຼັກຊັບຄ້ຳປະກັນຫາກຫຼຸດລົງ ຕ້ອງຊຸກຍູ້ຜູ້ຄ້ຳປະກັນການຊຳລະໜີ້ ໃຫ້ມີມາດຕະການຮອງຮັບ ແລະ ຕິດຕາມການຈັດຕັ້ງປະຕິບັດ;
4. ຕິດຕາມສະພາບການເຄື່ອນໄຫວຂອງບັນຊີສະເພາະ ທີ່ຮອງຮັບການຊຳລະຕົ້ນທຶນ ແລະ ດອກເບ້ຍຂອງຮຸ້ນກູ້;
5. ກວດກາການນຳໃຊ້ທຶນທີ່ລະດົມໄດ້ ໃຫ້ສອດຄ່ອງກັບເນື້ອໃນທີ່ໄດ້ລະບຸໄວ້ໃນໜັງສືຊວນຊື້ ແລະ ເອກະສານທີ່ກ່ຽວຂ້ອງ;

6. ຕິດຕາມ ແລະ ຊຸກຍູ້ໃຫ້ຜູ້ອອກຈຳໜ່າຍຮຸ້ນກູ້ ເປີດເຜີຍຂໍ້ມູນ ແລະ ເຫດການສຳຄັນຕ່າງໆ ຜ່ານພາຫະນະສື່ມວນຊົນ ຕາມລະບຽບວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ;
7. ຕິດຕາມການປະຕິບັດພັນທະຂອງຜູ້ອອກຈຳໜ່າຍຮຸ້ນກູ້ ຕາມທີ່ໄດ້ກຳນົດໄວ້ໃນໃບຮຸ້ນກູ້ລວມ, ໃບຢັ້ງຢືນການຖືຄອງຮຸ້ນກູ້ ແລະ ຕາມສັນຍາແຕ່ງຕັ້ງຕົວແທນຜູ້ຖືຮຸ້ນກູ້;
8. ຮຽກເປີດ ແລະ ດຳເນີນກອງປະຊຸມຜູ້ຖືຮຸ້ນກູ້ ເພື່ອຂໍມະຕິກອງປະຊຸມຜູ້ຖືຮຸ້ນກູ້ ພາຍໃນ ເກົ້າສິບວັນ ນັບແຕ່ວັນທີ່ຮັບຮູ້ຂໍ້ມູນ ຫຼື ຄວນຮູ້ ເປັນຕົ້ນໄປ ໃນກໍລະນີ ຜູ້ອອກຈຳໜ່າຍຮຸ້ນກູ້ ບໍ່ສາມາດຊຳລະຕົ້ນທຶນ ແລະ ດອກເບ້ຍ ຫຼື ບໍ່ສາມາດປະຕິບັດຕາມເງື່ອນໄຂ ຕາມທີ່ໄດ້ກຳນົດໄວ້ໃນໃບຮຸ້ນກູ້ລວມ ແລະ ໃບຢັ້ງຢືນການຖືຄອງຮຸ້ນກູ້ ຍົກເວັ້ນ ກໍລະນີ ສັນຍາແຕ່ງຕັ້ງຕົວແທນຜູ້ຖືຮຸ້ນກູ້ ໄດ້ກຳນົດເປັນຢ່າງອື່ນ. ຕົວແທນຜູ້ຖືຮຸ້ນກູ້ ຕ້ອງແຈ້ງຢ່າງເປັນລາຍລັກອັກສອນ ໃຫ້ຜູ້ຖືຮຸ້ນກູ້ຊາບລ່ວງໜ້າຢ່າງໜ້ອຍ ເຈັດວັນລັດຖະການ (7 ວັນລັດຖະການ) ກ່ອນເປີດກອງປະຊຸມຜູ້ຖືຮຸ້ນກູ້;
9. ຮຽກຮ້ອງເອົາຂໍ້ມູນທີ່ຕິດພັນກັບຮຸ້ນກູ້ ຈາກຕະຫຼາດຫຼັກຊັບລາວ;
10. ເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນຂອງ ຜູ້ອອກຈຳໜ່າຍຮຸ້ນກູ້;
11. ດຳເນີນການຮຽກຮ້ອງ ຫຼື ຮ້ອງຟ້ອງຄ່າເສັຍຫາຍແທນຜູ້ຖືຮຸ້ນກູ້ ກໍລະນີ ຜູ້ອອກຈຳໜ່າຍຮຸ້ນກູ້ ມີການລະເມີດການຊຳລະຕົ້ນທຶນ ແລະ ດອກເບ້ຍ;
12. ຕິດຕາມການປະຕິບັດສິດ ແລະ ໜ້າທີ່ອື່ນໆ ຂອງຜູ້ອອກຈຳໜ່າຍຮຸ້ນກູ້ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 12 ສິດ ແລະ ໜ້າທີ່ ຂອງຜູ້ອອກຈຳໜ່າຍຮຸ້ນກູ້**

ຜູ້ອອກຈຳໜ່າຍຮຸ້ນກູ້ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ສົ່ງໜັງສືແຈ້ງໃຫ້ແກ່ຕົວແທນຜູ້ຖືຮຸ້ນກູ້ ທັນທີ ເມື່ອມີເຫດໃດໜຶ່ງ ເກີດຂຶ້ນ ດັ່ງນີ້:
    1. ຜິດນັດຊຳລະ ຕົ້ນທຶນ ຫຼື ດອກເບ້ຍ;
    2. ຜູ້ອອກຈຳໜ່າຍຮຸ້ນກູ້ ຖືກດຳເນີນຄະດີ ຫຼື ຖືກກ່າວຫາໃຫ້ເປັນຝ່າຍຮັບຜິດຊອບ ໃນຂໍ້ຂັດແຍ່ງໃດໜຶ່ງ ຊຶ່ງອາດມີຜົນກະທົບຢ່າງຮ້າຍແຮງ ຕໍ່ຄວາມສາມາດໃນການຊຳລະຕົ້ນທຶນ ຫຼື ດອກເບ້ຍ;
    3. ມີການປ່ຽນແປງຕົວແທນຜູ້ຖືຮຸ້ນກູ້ ຕາມກຳນົດເວລາ ທີ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ກຳນົດ.
2. ສົ່ງສຳເນົາ ເອກະສານການປະເມີນມູນຄ່າຊັບສິນ ລາຄາຊັບສິນທີ່ເປັນຫຼັກຊັບຄ້ຳປະກັນ ຈາກຜູ້ປະເມີນມູນຄ່າຊັບສິນ ທີ່ໄດ້ຮັບອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບພາຍໃນ ຫົກສິບວັນ (60 ວັນ) ນັບແຕ່ວັນທີສິ້ນສຸດການປະເມີນຊັບສິນ ໃຫ້ແກ່ຕົວແທນຜູ້ຖືຮຸ້ນກູ້ ຫຼື ວັນທີຕົວແທນຜູ້ຖືຮຸ້ນກູ້ ຮຽກຮ້ອງ;
3. ສົ່ງສຳເນົາ ຫຼື ຜົນການຈັດລຳດັບຄວາມໜ້າເຊື່ອຖື ຂອງຜູ້ອອກຈຳໜ່າຍຮຸ້ນ ກໍລະນີທີ່ຜົນການຈັດລຳດັບຄວາມໜ້າເຊື່ອຖື ມີການປ່ຽນແປງ ໃຫ້ແກ່ຕົວແທນຜູ້ຖືຮຸ້ນກູ້;ຊຳລະ ຕົ້ນທຶນ ແລະ ດອກເບ້ຍ ຕາມມູນຄ່າຮຸ້ນກູ້ ເມື່ອຄົບກຳນົດເວລາຊຳລະດອກເບ້ຍ ແລະ ໄຖ່ຖອນຮຸ້ນກູ້;
4. ສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ໜັງສືຊວນຊື້ ແລະ ໃບຮຸ້ນກູ້.

**ມາດຕາ 13 ສິດ ແລະ ໜ້າທີ່ຂອງຜູ້ຖືຮຸ້ນກູ້**

ຜູ້ຖືຮຸ້ນກູ້ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ໄດ້ຮັບຂໍ້ມູນຂ່າວສານ ແລະ ສາມາດ ກວດສອບເອກະສານ ທີ່ກ່ຽວຂ້ອງກັບການເຄື່ອນໄຫວທຸລະກິດ ຂອງຜູ້ອອກຈຳໜ່າຍຮຸ້ນກູ້ ຕາມລະບຽບການ;
2. ສະເໜີຕົວແທນຜູ້ຖືຮຸ້ນກູ້ ເພື່ອເປີດປະຊຸມຜູ້ຖືຮຸ້ນກູ້ ແລະ ເຂົ້າຮ່ວມກອງປະຊຸມ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 11 ຂໍ້ 8 ຂອງຂໍ້ຕົກລົງສະບັບນີ້;
3. ທວງໃຫ້ຜູ້ອອກຈຳໜ່າຍຮຸ້ນກູ້ ຊຳລະຕົ້ນທຶນ ແລະ ດອກເບ້ຍ ຕາມທີ່ໄດ້ກຳນົດໃນ ໃບຮຸ້ນກູ້ເມື່ອຄົບກຳນົດເວລາຊຳລະດອກເບ້ຍ ແລະ ໄຖ່ຖອນຮຸ້ນກູ້;
4. ສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ໜັງສືຊວນຊື້ ແລະ ໃບຮຸ້ນກູ້.

## ໝວດທີ 4
## ການລາຍງານ ແລະ ຄ່າທຳນຽມ

**ມາດຕາ 14 ການລາຍງານ**

ຕົວແທນຜູ້ຖືຮຸ້ນກູ້ ຕ້ອງລາຍງານການເຄື່ອນໄຫວວຽກງານຂອງຕົນຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ດັ່ງລຸ່ມນີ້:

1. ການປ່ຽນແປງລະບຽບການ ແລະ ຄູ່ມື ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງຕົວແທນຜູ້ຖືຮຸ້ນກູ້ ພາຍໃນ ຫ້າ ວັນລັດຖະການ (5 ວັນລັດຖະການ) ນັບແຕ່ມື້ປ່ຽນແປງ;
2. ການປ່ຽນແປງຜູ້ບໍລິຫານ ຫຼື ພະນັກງານທີ່ປະຕິບັດໜ້າທີ່ ທາງດ້ານການເປັນຕົວແທນຜູ້ຖືຮຸ້ນກູ້ ພາຍໃນ ສອງວັນລັດຖະການ (2 ວັນລັດຖະການ) ນັບແຕ່ມື້ປ່ຽນແປງ;
3. ການເຄື່ອນໄຫວໃຫ້ບໍລິການເປັນຕົວແທນຜູ້ຖືຮຸ້ນກູ້ ປະຈຳໄຕມາດໜຶ່ງ ແລະ ໄຕມາດສາມ ພາຍໃນ ສິບຫ້າວັນລັດຖະການ (15 ວັນລັດຖະການ) ຫຼັງສິ້ນສຸດໄຕມາດ, ປະຈຳຫົກເດືອນຕົ້ນປີ ພາຍໃນ ສາມສິບວັນ (30 ວັນ) ນັບແຕ່ວັນສິ້ນສຸດໄຕມາດສອງ ແລະ ປະຈຳປີ ພາຍໃນໄຕມາດໜຶ່ງຂອງປີຖັດໄປ;
4. ການເຄື່ອນໄຫວຂອງຜູ້ອອກຈຳໜ່າຍຮຸ້ນກູ້ ທີ່ເຫັນວ່າອາດສົ່ງຜົນກະທົບຕໍ່ຜົນປະໂຫຍດຂອງຜູ້ຖືຮຸ້ນກູ້;
5. ລາຍງານອື່ນໆ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ຕົວແທນຜູ້ຖືຮຸ້ນກູ້ ຕ້ອງເກັບຮັກສາເອກະສານການລາຍງານ ແລະ ຂໍ້ມູນຕ່າງໆ ທີ່ຕິດພັນກັບການໃຫ້ບໍລິການເປັນຕົວແທນຜູ້ຖືຮຸ້ນກູ້ໄວ້ເປັນຢ່າງດີ ແລະ ຕ້ອງເກັບຮັກສາໄວ້ ຢ່າງໜ້ອຍ ສິບປີ.

ຜູ້ອອກຈຳໜ່າຍຮຸ້ນກູ້ ຕ້ອງສົ່ງລາຍງານ ໃຫ້ແກ່ຕົວແທນຜູ້ຖືຮຸ້ນກູ້ ພາຍໃນກຳນົດເວລາ ດັ່ງນີ້:

1. ສຳເນົາເອກະສານລາຍງານການເງິນ ປະຈຳໄຕມາດ 1 ແລະ ໄຕມາດ 3 ພາຍໃນ ສີ່ສິບຫ້າວັນ (45 ວັນ) ນັບແຕ່ວັນສິ້ນສຸດ ໄຕມາດ 1 ແລະ ໄຕມາດ 3 ເປັນຕົ້ນໄປ;

2. ສຳເນົາເອກະສານລາຍງານການເງິນ ຫົກເດືອນຕົ້ນປີ ພາຍໃນ ຫົກສິບວັນ (60 ວັນ) ພາຍຫຼັງສິ້ນສຸດໄຕມາດ 2 ເປັນຕົ້ນໄປ;
3. ສຳເນົາ ບົດສະຫຼຸບການເຄື່ອນໄຫວທຸລະກິດປະຈຳປີ ແລະ ເອກະສານລາຍງານການເງິນ ປະຈຳປີ ພາຍໃນ ໜຶ່ງຮ້ອຍຊາວວັນ (120 ວັນ) ພາຍຫຼັງສິ້ນສຸດປີການບັນຊີ ເປັນຕົ້ນໄປ;
4. ສະໜອງເອກະສານ, ບົດລາຍງານ ຫຼື ຫຼັກຖານ ອື່ນໆ ທີ່ຕົວແທນຜູ້ຖືຮຸ້ນກູ້ ຮຽກຮ້ອງຕາມລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 15 ຄ່າທຳນຽມ**

ຕົວແທນຜູ້ຖືຮຸ້ນກູ້ ຕ້ອງເສຍຄ່າທຳນຽມໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ດັ່ງນີ້:

1. ຄ່າອອກໃບອະນຸຍາດ ຈຳນວນ ສາມລ້ານກີບ (3.000.000 ກີບ) ແລະ ຕ້ອງຊຳລະພາຍໃນວັນທີ່ໄດ້ຮັບໃບອະນຸຍາດ;
2. ຄ່າຄຸ້ມຄອງປະຈຳປີ ຈຳນວນ ຫ້າລ້ານກີບ (5.000.000 ກີບ) ແລະ ຕ້ອງຊຳລະພາຍໃນໄຕມາດໜຶ່ງຂອງປີຖັດໄປ, ໃນກໍລະນີ ຕົວແທນຜູ້ຖືຮຸ້ນກູ້ບໍ່ໄດ້ໃຫ້ບໍລິການເປັນຕົວແທນຜູ້ຖືຮຸ້ນກູ້ໃນປີໃດໜຶ່ງ ແມ່ນຈະບໍ່ໄດ້ເສຍຄ່າຄຸ້ມຄອງປະຈຳປີຂອງປີນັ້ນ. ສຳລັບ ບໍລິສັດຫຼັກຊັບ ແລະ ທະນາຄານທຸລະກິດທີ່ເຮັດໜ້າທີ່ດູແລຊັບສິນ ຈະຖືກຍົກເວັ້ນຄ່າຄຸ້ມຄອງປະຈຳປີ.

## ໝວດທີ 5
## ຂໍ້ຫ້າມ, ການໂຈະ ແລະ ການຍົກເລີກ ການອະນຸຍາດເປັນຕົວແທນຜູ້ຖືຮຸ້ນກູ້

**ມາດຕາ 16 ຂໍ້ຫ້າມ**

ຕົວແທນຜູ້ຖືຮຸ້ນກູ້ ຫ້າມມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ເປັນຜູ້ຄ້ຳປະກັນການຊຳລະໜີ້ຂອງ ຜູ້ອອກຈຳໜ່າຍຮຸ້ນກູ້;
2. ເປັນຜູ້ຖືຮຸ້ນຂອງຜູ້ອອກຈຳໜ່າຍຮຸ້ນກູ້ ທີ່ມີສິດອອກສຽງ ນັບແຕ່ ຫ້າສ່ວນຮ້ອຍຂຶ້ນໄປ (5% ຂຶ້ນໄປ) ຂອງຈຳນວນຮຸ້ນທີ່ມີສິດອອກສຽງທັງໝົດ;
3. ໃຫ້ຜູ້ອອກຈຳໜ່າຍຮຸ້ນກູ້ຖືຮຸ້ນຂອງຕົນ ນັບແຕ່ ຫ້າສ່ວນຮ້ອຍຂຶ້ນໄປ (5% ຂຶ້ນໄປ) ຂອງຈຳນວນຮຸ້ນທີ່ມີສິດອອກສຽງທັງໝົດ;
4. ໃຫ້ຜູ້ຖືຮຸ້ນລາຍໃຫຍ່ຂອງຕົນ ຖືຮຸ້ນຂອງຜູ້ອອກຈຳໜ່າຍຮຸ້ນກູ້ ນັບແຕ່ ຫ້າສ່ວນຮ້ອຍຂຶ້ນໄປ (5% ຂຶ້ນໄປ);
5. ມີສະມາຊິກສະພາບໍລິຫານທີ່ເປັນບຸກຄົນດຽວກັນກັບ ຜູ້ອອກຈຳໜ່າຍຮຸ້ນກູ້ ເວັ້ນແຕ່ ບຸກຄົນນັ້ນເປັນກຳມະການທີ່ບໍ່ມີສ່ວນຮ່ວມໃນການບໍລິຫານ ຂອງຕົວແທນຜູ້ຖືຮຸ້ນກູ້ ແລະ ຜູ້ອອກຈຳໜ່າຍຮຸ້ນກູ້;

6. ເປັນຄູ່ສັນຍາກັບຜູ້ອອກຈຳໜ່າຍຮຸ້ນກູ້ ທີ່ມີເນື້ອໃນເຮັດໃຫ້ບໍ່ສາມາດປະຕິບັດສິດ ແລະ ໜ້າທີ່ຂອງຕົນໃນການເປັນຕົວແທນຜູ້ຖືຮຸ້ນກູ້;
7. ໃຫ້ບຸກຄົນອື່ນ ປະຕິບັດໜ້າທີ່ເປັນຕົວແທນຜູ້ຖືຮຸ້ນກູ້ ແທນຕົນ;
8. ນຳເອົາຊັບສິນທີ່ເປັນຫຼັກຊັບຄ້ຳປະກັນ ຊຶ່ງຢູ່ໃນການຄຸ້ມຄອງຂອງຕົນ ເພື່ອສະແຫວງຫາຜົນປະໂຫຍດ ຫຼື ໃຫ້ບຸກຄົນອື່ນນຳໄປໃຊ້. ຍົກເວັ້ນທີ່ລະບຸໄວ້ໃນໃບແຕ່ງຕັ້ງຕົວແທນຜູ້ຖືຮຸ້ນກູ້;
9. ຊື້ຫຼັກຊັບຄ້ຳປະກັນ ທີ່ຄ້ຳປະກັນການຊຳລະໜີ້ສິນຂອງຮຸ້ນກູ້ ໂດຍທາງກົງ ຫຼື ທາງອ້ອມ ຂອງຜູ້ອອກຈຳໜ່າຍຮຸ້ນກູ້ ຫຼື ຜູ້ຄ້ຳປະກັນການຊຳລະໜີ້ ຢູ່ໃນໄລຍະການດຳເນີນຄະດີ;
10. ຮັບຊັບສິນ ຫຼື ປະໂຫຍດອື່ນໆ ໂດຍທາງກົງ ຫຼື ທາງອ້ອມ ຈາກບຸກຄົນໃດໜຶ່ງ ທີ່ມາຊື້ຫຼັກຊັບຄ້ຳປະກັນ ຫຼື ຊັບສິນ ຂອງ ຜູ້ຄ້ຳປະກັນການຊຳລະໜີ້ ຫຼື ຜູ້ອອກຈຳໜ່າຍຮຸ້ນກູ້ ທີ່ຢູ່ໃນໄລຍະການດຳເນີນຄະດີ ເພື່ອການຊຳລະໜີ້ສິນຂອງຮຸ້ນກູ້;
11. ຮັບຜົນປະໂຫຍດ ຫຼື ສິ່ງຕອບແທນອື່ນໆ ຈາກການດຳເນີນການຮຽກຮ້ອງ ຫຼື ຮ້ອງຟ້ອງຄ່າເສຍຫາຍ ແທນຜູ້ຖືຮຸ້ນກູ້ ໃນການນຳໃຊ້ຫຼັກຊັບຄ້ຳປະກັນ ຫຼື ຊັບສິນ ເພື່ອຊຳລະໜີ້ສິນຂອງຮຸ້ນກູ້ ນອກເໜືອຈາກຜົນປະໂຫຍດທີ່ໄດ້ຕົກລົງໄວ້ໃນໃບແຕ່ງຕັ້ງຕົວແທນຜູ້ຖືຮຸ້ນກູ້;
12. ກະທຳການໃດໜຶ່ງທີ່ເປັນການສ້າງ ຫຼື ອາດສ້າງຄວາມເສຍຫາຍແກ່ຜູ້ຖືຮຸ້ນກູ້;
13. ຫັກເງິນທີ່ຕ້ອງແຈກຈ່າຍໃຫ້ແກ່ຜູ້ຖືຮຸ້ນກູ້ ຊຶ່ງໄດ້ມາຈາກການຮຽກຮ້ອງ ຫຼື ຮ້ອງຟ້ອງຄ່າເສຍຫາຍ ແທນຜູ້ຖືຮຸ້ນກູ້ ໃນກໍລະນີ ຜູ້ອອກຈຳໜ່າຍຮຸ້ນກູ້ ມີການລະເມີດການຊຳລະຕົ້ນທຶນ ແລະ ດອກເບ້ຍ;
14. ມີພຶດຕິກຳອື່ນ ທີ່ລະເມີດລະບຽບກົດໝາຍທີ່ກ່ຽວຂ້ອງ.

### ມາດຕາ 17 ການໂຈະການເຄື່ອນໄຫວເປັນຕົວແທນຜູ້ຖືຮຸ້ນກູ້

ຕົວແທນຜູ້ຖືຮຸ້ນກູ້ ຈະຖືກໂຈະການເຄື່ອນໄຫວເປັນຕົວແທນຜູ້ຖືຮຸ້ນກູ້ ໃຫ້ແກ່ຜູ້ອອກຈຳໜ່າຍຮຸ້ນກູ້ ຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃນກໍລະນີ ໃດໜຶ່ງ ຫຼື ທັງໝົດ ດັ່ງນີ້:

1. ລະເມີດຂໍ້ຫ້າມໃດໜຶ່ງ ຫຼື ທັງໝົດ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 16 ຂອງຂໍ້ຕົກລົງສະບັບນີ້;
2. ລະບົບການຄຸ້ມຄອງບໍລິຫານພາຍໃນ ໃນການປະຕິບັດໜ້າທີ່ເປັນຕົວແທນຜູ້ຖືຮຸ້ນກູ້ ບໍ່ມີປະສິດທິພາບ;
3. ຜູ້ບໍລິຫານ ແລະ ພະນັກງານ ຖືກສານຕັດສິນລົງ ໂທດທາງອາຍາ ເປັນຕົ້ນ ໃນສະຖານສໍ້ໂກງຊັບ, ຍັກຍອກຊັບ, ຮັບ ຫຼື ໃຫ້ສິນບົນ, ສໍ້ລາດບັງຫຼວງ ຫຼື ຟອກເງິນ ແລະ ກະທຳຜິດໃນຂະແໜງການເງິນ-ການທະນາຄານ ທີ່ເຮັດໃຫ້ບໍ່ສາມາດປະຕິບັດໜ້າທີ່ເປັນຕົວແທນຜູ້ຖືຮຸ້ນກູ້ຕໍ່ໄປໄດ້;
4. ມີຈຳນວນພະນັກງານທີ່ບໍ່ພຽງພໍ ແລະ ບໍ່ມີປະສົບການໃນການໃຫ້ບໍລິການເປັນຕົວແທນຜູ້ຖືຮຸ້ນກູ້.

ຕົວແທນຜູ້ຖືຮຸ້ນກູ້ທີ່ຖືກໂຈະການເຄື່ອນໄຫວ ໃນກໍລະນີໃດໜຶ່ງ ຫຼື ທັງໝົດ ຕາມທີ່ໄດ້ກຳນົດໄວ້ໃນວັກທີໜຶ່ງຂອງມາດຕານີ້ ຈະຕ້ອງແກ້ໄຂບັນຫາ ຕາມກຳນົດເວລາທີ່ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ກຳນົດ.

ໃນໄລຍະທີ່ ຕົວແທນຜູ້ຖືຮຸ້ນກູ້ຖືກໂຈະການເຄື່ອນໄຫວເປັນຕົວແທນຜູ້ຖືຮຸ້ນກູ້, ຜູ້ອອກຈໍາໜ່າຍຮຸ້ນກູ້ ແລະ ຕົວແທນຜູ້ຖືຮຸ້ນກູ້ ຕ້ອງຮຽກເປີດກອງປະຊຸມຜູ້ຖືຮຸ້ນກູ້ ເພື່ອແຕ່ງຕັ້ງຕົວແທນຜູ້ຖືຮຸ້ນກູ້ລາຍໃໝ່ ພາຍໃນກໍານົດເວລາ ສາມສິບວັນ (30 ວັນ) ນັບແຕ່ວັນທີ່ມີການໂຈະການເຄື່ອນໄຫວຕົວແທນຜູ້ຖືຮຸ້ນກູ້ ເປັນຕົ້ນໄປ. ໃນໄລຍະເວລາລໍຖ້າການແຕ່ງຕັ້ງຕົວແທນຜູ້ຖືຮຸ້ນກູ້ລາຍໃໝ່ ຜູ້ອອກຈໍາໜ່າຍຮຸ້ນກູ້ ຕ້ອງປະຕິບັດໜ້າທີ່ເປັນຕົວແທນຜູ້ຖືຮຸ້ນກູ້ ຈົນກວ່າຈະມີການແຕ່ງຕັ້ງຕົວແທນຜູ້ຖືຮຸ້ນກູ້ລາຍໃໝ່.

ກໍລະນີ ບໍ່ສາມາດຊອກຕົວແທນຜູ້ຖືຮຸ້ນກູ້ລາຍໃໝ່ ມາປ່ຽນແທນຕົວແທນຜູ້ຖືຮຸ້ນກູ້ລາຍເດີມ ຜູ້ອອກຈໍາໜ່າຍຮຸ້ນກູ້ ຕ້ອງສະເໜີຜູ້ຖືຮຸ້ນກູ້ໃດໜຶ່ງ ເພື່ອປະຕິບັດໜ້າທີ່ເປັນຕົວແທນຜູ້ຖືຮຸ້ນກູ້ ຈົນກວ່າຈະສາມາດແຕ່ງຕັ້ງຕົວແທນຜູ້ຖືຮຸ້ນກູ້ລາຍໃໝ່ ທີ່ໄດ້ຮັບອະນຸຍາດເປັນຕົວແທນຜູ້ຖືຮຸ້ນກູ້ ຈາກ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

### ມາດຕາ 18 ການສິ້ນສຸດການເປັນຕົວແທນຜູ້ຖືຮຸ້ນກູ້

ຕົວແທນຜູ້ຖືຮຸ້ນກູ້ ຈະສິ້ນສຸດການເປັນຕົວແທນຜູ້ຖືຮຸ້ນກູ້ ຈາກສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ໃນກໍລະນີ ດັ່ງນີ້:

1. ຂໍຍົກເລີກດ້ວຍຄວາມສະໝັກໃຈຂອງຄູ່ສັນຍາ;
2. ບໍ່ສາມາດແກ້ໄຂ ຫຼື ບໍ່ແກ້ໄຂບັນຫາ ຕາມກໍານົດເວລາ ທີ່ໄດ້ກໍານົດໄວ້ໃນມາດຕາ 17 ວັກ 2 ຂອງຂໍ້ຕົກລົງສະບັບນີ້;
3. ລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງໃນຂົງເຂດການເງິນ-ການທະນາຄານ ທີ່ມີລັກສະນະຮ້າຍແຮງ;
4. ຖືກສານຕັດສິນໃຫ້ລົ້ມລະລາຍ.

ຜູ້ອອກຈໍາໜ່າຍຮຸ້ນກູ້ ຕ້ອງແຕ່ງຕັ້ງຕົວແທນຜູ້ຖືຮຸ້ນກູ້ລາຍໃໝ່ ເພື່ອປ່ຽນແທນຕົວແທນຜູ້ຖືຮຸ້ນກູ້ລາຍເດີມທີ່ຖືກຍົກເລີກການເປັນຕົວແທນຜູ້ຖືຮຸ້ນກູ້ ຕາມທີ່ໄດ້ກໍານົດໄວ້ໃນວັກທີໜຶ່ງ ຂອງມາດຕານີ້ ພາຍໃນກໍານົດເວລາ ສາມສິບວັນ (30 ວັນ) ນັບແຕ່ວັນຍົກເລີກຕົວແທນຜູ້ຖືຮຸ້ນກູ້ ເປັນຕົ້ນໄປ.

ຕົວແທນຜູ້ຖືຮຸ້ນກູ້ ທີ່ຖືກຍົກເລີກການເປັນຕົວແທນຜູ້ຖືຮຸ້ນກູ້ ຕ້ອງປະຕິບັດໜ້າທີ່ຈົນກວ່າໄດ້ມອບຊັບສິນ, ເອກະສານ ຫຼື ຫຼັກຖານທີ່ກ່ຽວຂ້ອງທັງໝົດໃຫ້ແກ່ ຕົວແທນຜູ້ຖືຮຸ້ນກູ້ລາຍໃໝ່ ແລະ ຕ້ອງໃຫ້ຄວາມຮ່ວມມືກັບ ຕົວແທນຜູ້ຖືຮຸ້ນກູ້ລາຍໃໝ່ ໃນການປະຕິບັດໜ້າທີ່ເປັນຕົວແທນຜູ້ຖືຮຸ້ນກູ້.

## ໝວດທີ 6
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 19 ນະໂຍບາຍຕໍ່ຜູ້ມີຜົນງານ

ຕົວແທນຜູ້ຖືຮຸ້ນກູ້, ຜູ້ຖືຮຸ້ນກູ້, ຜູ້ອອກຈໍາໜ່າຍຮຸ້ນກູ້, ຜູ້ຄໍ້າປະກັນການຊໍາລະໜີ້ ແລະ ພາກສ່ວນທີ່ກ່ຽວຂ້ອງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດລະບຽບສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນໆ ຕາມລະບຽບການສະເພາະ.

ມາດຕາ 20 ມາດຕະການຕໍ່ຜູ້ລະເມີດ

ຕົວແທນຜູ້ຖືຮຸ້ນກູ້, ຜູ້ຖືຮຸ້ນກູ້, ຜູ້ອອກຈຳໜ່າຍຮຸ້ນກູ້, ຜູ້ຄ້ຳປະກັນການຊຳລະໜີ້ ແລະ ພາກສ່ວນທີ່ກ່ຽວຂ້ອງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ທີ່ກໍ່ໃຫ້ເກີດຄວາມເສັຍຫາຍແກ່ ລະບົບຕະຫຼາດທຶນຂອງ ສປປ ລາວ ຈະຖືກສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສັຍຫາຍທາງແພ່ງ ຫຼື ຮັບຜິດຊອບທາງອາຍາ ຕາມກໍລະນີ ເບົາ ຫຼື ໜັກ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍຫຼັກຊັບ ແລະ ລະບຽບການທີ່ກ່ຽວຂ້ອງ.

1. ມາດຕະການສຶກສາອົບຮົມ

ຕົວແທນຜູ້ຖືຮຸ້ນກູ້, ຜູ້ຖືຮຸ້ນກູ້, ຜູ້ອອກຈຳໜ່າຍຮຸ້ນກູ້, ຜູ້ຄ້ຳປະກັນການຊຳລະໜີ້ ແລະ ພາກສ່ວນທີ່ກ່ຽວຂ້ອງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຊຶ່ງເປັນການລະເມີດຄັ້ງທຳອິດ, ມີລັກສະນະເບົາ ແລະ ກໍ່ຄວາມເສັຍຫາຍບໍ່ເກີນ ຫ້າແສນກີບ ຈະຖືກກ່າວເຕືອນ ແລະ ສຶກສາອົບຮົມ.

2. ມາດຕະການລົງວິໄນ

ຜູ້ບໍລິຫານ ແລະ ພະນັກງານຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ຫຼື ພະນັກງານລັດຖະກອນ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ຈະຖືກ ລົງວິໄນ ຕາມແຕ່ລະກໍລະນີ ດັ່ງນີ້:

2.1. ກ່າວເຕືອນ;

2.2. ໂຈະການເລື່ອນຊັ້ນ, ຂັ້ນເງິນເດືອນ;

2.3. ປົດຕຳແໜ່ງ ຫຼື ຍົກຍ້າຍໄປຮັບໜ້າທີ່ອື່ນ ທີ່ມີຕຳແໜ່ງຕ່ຳກວ່າ;

2.4. ໃຫ້ອອກຈາກລັດຖະກອນ ໂດຍບໍ່ໄດ້ຮັບນະໂຍບາຍໃດໆ.

ຜູ້ຖືກລົງວິໄນ ຕ້ອງມອບຊັບສິນທີ່ໄດ້ມາໂດຍບໍ່ຖືກຕ້ອງນັ້ນ ແກ່ການຈັດຕັ້ງທີ່ຕົນສັງກັດໃຫ້ຄົບຖ້ວນ.

3. ມາດຕະການປັບໃໝ ສຳລັບຕົວແທນຜູ້ຖືຮຸ້ນກູ້

ຕົວແທນຜູ້ຖືຮຸ້ນກູ້ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປັບໃໝ ຕາມແຕ່ລະກໍລະນີ ດັ່ງນີ້:

3.1. ເປັນຜູ້ຄ້ຳປະກັນການຊຳລະໜີ້ຂອງ ຜູ້ອອກຈຳໜ່າຍຮຸ້ນກູ້ ຈະຖືກປັບໃໝ ສິບ ຫາ ສາມສິບລ້ານກີບ (10.000.000 ກີບ ຫາ 30.000.000 ກີບ);

3.2. ເປັນຜູ້ຖືຮຸ້ນຂອງຜູ້ອອກຈຳໜ່າຍຮຸ້ນກູ້ ທີ່ມີສິດອອກສຽງ ນັບແຕ່ ຫ້າສ່ວນຮ້ອຍຂຶ້ນໄປ (5% ຂຶ້ນໄປ) ຂອງຈຳນວນຮຸ້ນທີ່ມີສິດອອກສຽງທັງໝົດຈະຖືກປັບໃໝ ສິບ ຫາ ສາມສິບລ້ານກີບ (10.000.000 ກີບ ຫາ 30.000.000 ກີບ);

3.3. ໃຫ້ຜູ້ອອກຈຳໜ່າຍຮຸ້ນກູ້ຖືຮຸ້ນຂອງຕົນ ນັບແຕ່ ຫ້າສ່ວນຮ້ອຍຂຶ້ນໄປ (5% ຂຶ້ນໄປ) ຂອງຈຳນວນຮຸ້ນທີ່ມີສິດອອກສຽງທັງໝົດ ຈະຖືກປັບໃໝ ສິບ ຫາ ສາມສິບລ້ານກີບ (10.000.000 ກີບ ຫາ 30.000.000 ກີບ);

3.4. ໃຫ້ຜູ້ຖືຮຸ້ນລາຍໃຫຍ່ຂອງຕົນ ຖືຮຸ້ນຂອງຜູ້ອອກຈຳໜ່າຍຮຸ້ນກູ້ ນັບແຕ່ ຫ້າສ່ວນຮ້ອຍຂຶ້ນໄປ (5% ຂຶ້ນໄປ)ຈະຖືກປັບໃໝ ສິບ ຫາ ສາມສິບລ້ານກີບ (10.000.000 ກີບ ຫາ 30.000.000 ກີບ);

3.5. ມີສະມາຊິກສະພາບໍລິຫານທີ່ເປັນບຸກຄົນດຽວກັນກັບ ຜູ້ອອກຈຳໜ່າຍຮຸ້ນກູ້ ເວັ້ນແຕ່ ບຸກຄົນນັ້ນເປັນກຳມະການທີ່ບໍ່ມີສ່ວນຮ່ວມໃນການບໍລິຫານ ຂອງຕົວແທນຜູ້ຖືຮຸ້ນກູ້ ແລະ

ຜູ້ອອກຈຳໜ່າຍຮຸ້ນກູ້ ຈະຖືກປັບໃໝ ສິບ ຫາ ສາມສິບລ້ານກີບ (10.000.000 ກີບ ຫາ 30.000.000 ກີບ);

3.6. ເປັນຄູ່ສັນຍາກັບຜູ້ອອກຈຳໜ່າຍຮຸ້ນກູ້ ທີ່ມີເນື້ອໃນເຮັດໃຫ້ບໍ່ສາມາດປະຕິບັດສິດ ແລະ ໜ້າທີ່ຂອງຕົນໃນການເປັນຕົວແທນຜູ້ຖືຮຸ້ນກູ້ຈະຖືກປັບໃໝ ສິບ ຫາ ສາມສິບລ້ານກີບ (10.000.000 ກີບ ຫາ 30.000.000 ກີບ);

3.7. ໃຫ້ບຸກຄົນອື່ນ ປະຕິບັດໜ້າທີ່ເປັນຕົວແທນຜູ້ຖືຮຸ້ນກູ້ ແທນຕົນຈະຖືກປັບໃໝ ສິບ ຫາ ສາມສິບລ້ານກີບ (10.000.000 ກີບ ຫາ 30.000.000 ກີບ);

3.8. ນຳເອົາຊັບສິນທີ່ເປັນຫຼັກຊັບຄ້ຳປະກັນ ຊຶ່ງຢູ່ໃນການຄຸ້ມຄອງຂອງຕົນ ເພື່ອສະແຫວງຫາຜົນປະໂຫຍດ ຫຼື ໃຫ້ບຸກຄົນອື່ນນຳໄປໃຊ້. ຍົກເວັ້ນທີ່ລະບຸໄວ້ໃນໃບແຕ່ງຕັ້ງຕົວແທນຜູ້ຖືຮຸ້ນກູ້ຈະຖືກປັບໃໝ ສິບ ຫາ ສາມສິບລ້ານກີບ (10.000.000 ກີບ ຫາ 30.000.000 ກີບ);

3.9. ຊື້ຫຼັກຊັບຄ້ຳປະກັນ ທີ່ຄ້ຳປະກັນການຊຳລະໜີ້ສິນຂອງຮຸ້ນກູ້ ໂດຍທາງກົງ ຫຼື ທາງອ້ອມຂອງຜູ້ອອກຈຳໜ່າຍຮຸ້ນກູ້ ຫຼື ຜູ້ຄ້ຳປະກັນການຊຳລະໜີ້ ຢູ່ໃນໄລຍະການດຳເນີນຄະດີຈະຖືກປັບໃໝ ສິບ ຫາ ສາມສິບລ້ານກີບ (10.000.000 ກີບ ຫາ 30.000.000 ກີບ);

3.10. ຮັບຊັບສິນ ຫຼື ປະໂຫຍດອື່ນໆ ໂດຍທາງກົງ ຫຼື ທາງອ້ອມ ຈາກບຸກຄົນໃດໜຶ່ງ ທີ່ມາຊື້ຫຼັກຊັບຄ້ຳປະກັນ ຫຼື ຊັບສິນ ຂອງ ຜູ້ຄ້ຳປະກັນການຊຳລະໜີ້ ຫຼື ຜູ້ອອກຈຳໜ່າຍຮຸ້ນກູ້ທີ່ຢູ່ໃນໄລຍະການດຳເນີນຄະດີ ເພື່ອການຊຳລະໜີ້ສິນຂອງຮຸ້ນກູ້ຈະຖືກປັບໃໝ ສິບ ຫາ ສາມສິບລ້ານກີບ (10.000.000 ກີບ ຫາ 30.000.000 ກີບ);

3.11. ຮັບຜົນປະໂຫຍດ ຫຼື ສິ່ງຕອບແທນອື່ນໆ ຈາກການດຳເນີນການຮຽກຮ້ອງ ຫຼື ຮ້ອງຟ້ອງຄ່າເສຍຫາຍ ແທນຜູ້ຖືຮຸ້ນກູ້ ໃນການນຳໃຊ້ຫຼັກຊັບຄ້ຳປະກັນ ຫຼື ຊັບສິນ ເພື່ອຊຳລະໜີ້ສິນຂອງຮຸ້ນກູ້ ນອກເໜືອຈາກຜົນປະໂຫຍດທີ່ໄດ້ຕົກລົງໄວ້ໃນໃບແຕ່ງຕັ້ງຕົວແທນຜູ້ຖືຮຸ້ນກູ້ຈະຖືກປັບໃໝ ສິບ ຫາ ສາມສິບລ້ານກີບ (10.000.000 ກີບ ຫາ 30.000.000 ກີບ);

3.12. ກະທຳການໃດໜຶ່ງທີ່ເປັນການສ້າງ ຫຼື ອາດສ້າງຄວາມເສຍຫາຍແກ່ຜູ້ຖືຮຸ້ນກູ້ ຈະຖືກປັບໃໝ ສິບ ຫາ ສາມສິບລ້ານກີບ (10.000.000 ກີບ ຫາ 30.000.000 ກີບ);

3.13. ຫັກເງິນທີ່ຕ້ອງແຈກຈ່າຍໃຫ້ແກ່ຜູ້ຖືຮຸ້ນກູ້ ຊຶ່ງໄດ້ມາຈາກການຮຽກຮ້ອງ ຫຼື ຮ້ອງຟ້ອງຄ່າເສຍຫາຍ ແທນຜູ້ຖືຮຸ້ນກູ້ ໃນກໍລະນີ ຜູ້ອອກຈຳໜ່າຍຮຸ້ນກູ້ ມີການລະເມີດການຊຳລະຕົ້ນທຶນ ແລະ ດອກເບ້ຍຈະຖືກປັບໃໝ ສິບ ຫາ ສາມສິບລ້ານກີບ (10.000.000 ກີບ ຫາ 30.000.000 ກີບ);

3.14. ບໍ່ເກັບຮັກສາເອກະສານການລາຍງານ ແລະ ຂໍ້ມູນຕ່າງໆທີ່ຕິດພັນກັບການໃຫ້ບໍລິການເປັນຕົວແທນຜູ້ຖືຮຸ້ນກູ້ ໃນໄລຍະເວລາທີ່ຕົນໃຫ້ບໍລິການ ແລະ ພາຍຫຼັງສຳເລັດການໃຫ້ບໍລິການດັ່ງກ່າວ ເປັນເວລາ ສິບປີ (10 ປີ) ຈະຖືກປັບໃໝ ຫ້າສິບລ້ານກີບ (50.000.000 ກີບ);

3.15. ລາຍງານການເຄື່ອນໄຫວວຽກງານຂອງຕົນ ຊັກຊ້າ ແຕ່ ໜຶ່ງ ຫາ ສິບ ວັນລັດຖະການ (1 ຫາ 10 ວັນລັດຖະການ) ຈະຖືກປັບໃໝ ສາມລ້ານກີບ (3.000.000 ກີບ) ຕໍ່ວັນ;

3.16. ລາຍງານການເຄື່ອນໄຫວວຽກງານຂອງຕົນ ຊັກຊ້າ ຫຼາຍກວ່າ ສິບ (10) ວັນລັດຖະການ ຖືວ່າບໍ່ລາຍງານ ຈະຖືກປັບໃໝ ສາມສິບລ້ານກີບ (30.000.000 ກີບ).

4. ມາດຕະການທາງແພ່ງ

ຕົວແທນຜູ້ຖືຮຸ້ນກູ້, ຜູ້ຖືຮຸ້ນກູ້, ຜູ້ອອກຈຳໜ່າຍຮຸ້ນກູ້, ຜູ້ຄ້ຳປະກັນການຊຳລະໜີ້ ແລະ ພາກສ່ວນທີ່ກ່ຽວຂ້ອງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຊຶ່ງໄດ້ກໍ່ຄວາມເສັຍຫາຍແກ່ຜູ້ອື່ນ ຈະຕ້ອງໃຊ້ແທນຄ່າເສັຍຫາຍຕາມມູນຄ່າຕົວຈິງ ທີ່ຕົນໄດ້ກໍ່ຂຶ້ນ.

5. ມາດຕະການທາງອາຍາ

ຕົວແທນຜູ້ຖືຮຸ້ນກູ້ ຫາກມີພຶດຕິກຳ ທີ່ເປັນການລະເມີດກົດໝາຍອາຍາ ຈະໄດ້ຮັບຖືກປະຕິບັດມາດຕະການທາງອາຍາ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍອາຍາ ຕາມແຕ່ລະກໍລະນີ ເບົາ ຫຼື ໜັກ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 21 ການຈັດຕັ້ງປະຕິບັດ**

ຕົວແທນຜູ້ຖືຮຸ້ນກູ້, ຜູ້ຖືຮຸ້ນກູ້, ຜູ້ອອກຈຳໜ່າຍຮຸ້ນກູ້, ຜູ້ຄ້ຳປະກັນການຊຳລະໜີ້ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນຢ່າງເຂັ້ມງວດ.

**ມາດຕາ 22 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ປະທານຄະນະກຳມະການຄຸ້ມຄອງຫຼັກຊັບ**

ສົມດີ ດວງດີ